ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********◇********

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ( ຄຄຊ)
(ຫ້ອງການ ຄຄຊ)

National Regulatory Authority
for UXO/Mine Action Sector in Lao PDR (NRA)
(NRA Office)

---

ເລກທີ່ 063 /ຄຄຊ
ວັນທີ 3 / 03 / 2010

## ບົດບັນທຶກກອງປະຊຸມກຸ່ມວິຊາການຊ່ວຍເຫຼືອຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ໄດ້ຈັດຂຶ້ນໃນຕອນເຊົ້າ 9:00ໂມງຂອງວັນທີ່ 27/01/2010 ທີ່ຫ້ອງປະຊຸມ ຄຄຊ

ລາຍຊື່ຜູ້ເຂົ້າຮ່ວມ

| ເລກທີ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ນຳເບີໂທລະສັບ | ທີ່ຢູ່ ອີເມວ |
|---|---|---|---|---|
| 1. | ທ່ານ ສົມນຶກ ວໍລະສານ | ຮອງອຳນວຍການ ຄຄຊ | 5055577 | somnuk.vorasarn@gmail.com |
| 2. | ທ່ານ ບຸນຕາວ ຈັນທະວົງສາ | ຫົວໜ້າ ໜ່ວຍງານຊ່ວຍ ເຫຼືອຜູ້ເຄາະຮ້າຍ ຄຄຊ | 2207361 | bountao@gmail.com |
| 3. | ທ່ານດຣ ຄຳໂກ້ ຈອມລັດ | ສູນຟື້ນຟູ | 5698868 | chomlako@yahoo.com |
| 4. | ທ່ານນາງ ວຽງມະນີ | ອົງການສຶກສາໂລກ | 5613699 | Viengmanylornaotuo86@gmail.com |
| 5. | ທ່ານ ທມຸມີ ສີລົມພັນ | ອົງການສຶກສາໂລກ | 9561196 | thommy@yahoo.com |
| 6. | ທ່ານ ວິໄຊຍະວົງ | ນາຍພາສາແປ | 2204217 | vinata@laotel.com |
| 7. | ທ່ານ ຈອນ ເຮັມພາລັນ | ແມັກ | 22204001 | fokCITK@yahoo.com |
| 8. | ທ່ານນາງ ບົວລະພັນ ອິນທະໄຊ | ແມັກ | 6777744 | maylaoclc@laopdr.com |
| 9. | ທ່ານນາງ ຊູເຊຍ ອໍໂບນ | ອົງການແຄ | 2272727 | Suzie@carelao.org |
| 10. | ທ່ານນາງ ຮອນລີ ມົວເລີ | ສະມາຄົມຄົນພິການລາວ | 7528525 | hollyjmm@hotmail.com |
| 11. | ທ່ານ ສົມເພັດ ອັກຄະວົງ | ສະມາຄົມຄົນພິການລາວ | 5610381 | akhavong@yahoo.com |
| 12. | ທ່ານ ຟີວບີນ | ຫ້ອງການ ຄຄຊ | 2013929 | beanphil1@yahoo.co.uk |
| 13. | ທ່ານ ທອງດີ ພົມມະວົງສາ | ຫົວໜ້າໜ່ວຍງານສຶກສາ ຄວາມສ່ຽງ | 5669883 | Thongdy.Phommavongsa@gmail.com |
| 14. | ທ່ານນາງ ຈັນທະລາວະດີ ຈຸນ ລະມະນີ | ເບຊິກນີດສ | 5512121 | chantharavady.choulamany@basicneeds.org |
| 15. | ທ່ານນາງ ມະນີພອນ ມະນີບົດ | ເບຊິກນີດສ | 5609343 | vannaphone.manibod@basicneeds.org |
| 16. | ທ່ານ ວິທິດ | ຜູ້ຊ່ວຍອົງການພັດທະນາ ຄົນພິການແຫ່ງປະເທດ ເບັນຢ້ຽມ | 5671109 | vithit@hilaos.orgVithit |
| 17. | ທ່ານ ວົງ ນັນທະວົງສາ | ວິຊາການຄົ້ນຄ້ວາ ຄຄຊ | 2636532 | Vong.pcia@gmail.com |
| 18. | ທ່ານ ບຸນນານ ລັດຕະນະວົງ | ວິຊາການໜ່ວຍງານ ມາດຕະຖານ ຄຄຊ | 5866772 | Bounan.rattanavongsa@gmail.com |
| 19. | ທ່ານ ຈອນ ເຟີລິດສ | ທີ່ປຶກສາໜ່ວຍງານປະຊາ ສຳພັນ ຄຄຊ | 7529505 | johnferech15@gmail.com |
| 20. | ທ່ານ ພົມມະຈັນ | ຫົວໜ້າໜ່ວຍງານເກັບກູ້ | 5693136 | phommachanh (pmc.seod@gmail.com) |
| 21. | ທ່ານ ລຸກ ເດັນນູວັນ | ຫົວໜ້າອົງການພັດທະນາ ຄົນພິການແຫ່ງປະເທດ | 5693908 | direction@hilaos.ovg |

| | | | | |
|---|---|---|---|---|
| | | ເບັນຢັງມ | | |
| 22. | ທ່ານ ນາງ ມະນີຈັນ ແກ້ວລະຄອນ | ຜູ້ຊ່ວຍວິຊາການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຄຄຊ | 2822256 | keolakhone@gmail.com |
| 23. | ທ່ານ ລົມໃຈ ເຊັ່ງຫວ່າງ | ພະນັກງານເກັບກໍາຂໍ້ມູນ ຄຄຊ | 2544749 | Vang_Cheng_Vang@iahoo.com |
| 24. | ທ່ານ ນາງ ປານີ | ພະນັກງານກວດກາຂໍ້ມູນ ຄຄຊ | 7850626 | |

**ວາລະກອງປະຊຸມ 1: ຕ້ອນຮັບແຂກ ແລະ ການແນະນໍາ**

ພິທີເປີດກອງປະຊຸມ ແລະ ຕ້ອນຮັບແຂກທີ່ເຂົ້າຮ່ວມກອງປະຊຸມກຸ່ມວິຊາການ ໂດຍທ່ານ ລົມນິກ ວໍລະສານ; ຫົວໜ້າພະແນກນະໂຍບາຍ-ບໍລິຫານ ແລະ ມາດຕະຖານ ຫ້ອງການຄຄຊ.

**ວາລະກອງປະຊຸມ 2: ບົດບັນທຶກກອງປະຊຸມຜ່ານມາ**

ບົດບັນທຶກກອງປະຊຸມກຸ່ມວິຊາການຜ່ານມາໄດ້ເໜັ້ນເຖິງ ແຜນວຽກຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ສັງລວມໂດຍ ທີ່ປຶກສາຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທ່ານ ໄມ໋ ບອໍດດີງຕັນ ແລະ ຍັງໄດ້ມີການປັບປຸງບົດບັນທຶກກອງປະຊຸມຕື່ມອີກ.

**ວາລະກອງປະຊຸມ 3: ບັນຫາອື່ນໆທີ່ຈະຍົກຂຶ້ນມາສົນທະນາ**

**ທ່ານ ພົວບົນ (ຄຄຊ):** ໄດ້ມີອົງການອົງການໜຶ່ງເຂົ້າຮ່ວມກອງປະຊຸມ ກຸ່ມວິຊາການ ທີ່ຈັດຂຶ້ນໂດຍ ກະຊວງສາທາລະນະສຸກບໍ່?
**ທ່ານ ລຸກ (ເຮັດໄອບີ):** ແມ່ນແລ້ວ, ທາງອົງການພັດທະນາຄົນພິການແຫ່ງປະເທດເບັນຢັງມ ເຄີຍໄດ້ເຂົ້າຮ່ວມ.

**ແຜນປະຕິບັດ:** ທາງໜ່ວຍງານຊ່ວຍຜູ້ຖືກເຄາະຮ້າຍຈະເປັນຜູ້ຕິດຕາມ ແລະ ເຂົ້າຮ່ວມກອງປະຊຸມ
**ຮັບຜິດຊອບໂດຍ:** ໜ່ວຍງານຊ່ວຍຜູ້ຖືກເຄາະຮ້າຍ ຫ້ອງການ ຄຄຊ

**ວາລະກອງປະຊຸມ 4 ພະນັກງານຝຶກຫັດໃນໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ**

**ທ່ານ ບຸນຕາວ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ):** ໄດ້ມີການແນະນໍາພະນັກງານຝຶກຫັດ ໃນໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ຊື່ນາງ ຊີລຽວ ເດດຈອມ ຜູ້ທີ່ຈະມາ ສ້າງແຜນຍຸດທະສາດ ສໍາລັບການ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

**ວາລະກອງປະຊຸມ 5 ການລາຍງານຄວາມຄືບໜ້າໄລຍະ2 ຂອງໜ່ວງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ**

**ທ່ານ ບຸນຕາວ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ):** ໄດ້ສະຫຼຸບລາຍງານຄວາມຄືບໜ້າໄລຍະ2 ຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຂໍ້ມູນດັ່ງກ່າວຈະຖືກລາຍງານຢູ່ໃນລະບົບການລາຍງານໄລຍະ2. ດັ່ງທີ່ທ່ານ ລົມນິກ ວໍລະສານ ຫົວໜ້າພະແນກນະໂຍບາຍ-ບໍລິຫານ ແລະ ມາດຕະຖານ ໄດ້ຊີ້ໃຫ້ເຫັນ ສະຖິຕິຈໍານວນຕົວເລກຂອງຜູ້ທີ່ເສຍຊີວິດ ແລະ ບາດເຈັບ ຈາກລະເບີດໃນປີ 2008, 2009 ແລະ 2010 ໂດຍສະເພາະແມ່ນຢູ່ແຂວງ ຊຽງຂວາງມີຈໍານວນ 93ຄົນ ໃນນັ້ນ 73ຄົນ ແມ່ນໄດ້ຮັບບາດເຈັບ ແລະ 20ຄົນ ແມ່ນເສຍຊີວິດ. ຮອງລົງມາແມ່ນຢູ່ແຂວງ ສະຫັວນນາເຂດ ມີຜູ້ເສຍຊີວິດ ແລະ ບາດເຈັບຈາກລະເບີດ ມີຈໍາ ນວນ 50ຄົນ ໃນນັ້ນ 40ຄົນ ແມ່ນໄດ້ຮັບບາດເຈັບ ແລະ 10ຄົນ ແມ່ນເສຍຊີວິດ. ຈໍານວນຕົວເລກສະຖິຕິນີ້ແມ່ນໄດ້ຮັບລາຍງານຈາກບ້ານ ທົ່ວປະເທດລາວປະຈຸບັນ ພວກເຮົາກໍາລັງເຮັດວຽກຮ່ວມກັບພະນັກງານເກັບກໍາຂໍ້ມູນຂັ້ນເມືອງ ເພື່ອສືບຕໍ່ການເກັບກໍາຂໍ້ມູນໄລຍະ2, ຫຼັງຈາກໄດ້ຮັບຂໍ້ມູນແລ້ວພວກເຮົາຈະເຮັດລາຍງານຫາຫ້ອງການ ຄຄຊ. ໃນການສໍາຫຼວດຂໍ້ມູນໄລຍະ2 ນີ້ພວກເຮົາໄດ້ສ້າງເຄືອຂ່າຍກັບພະແນກ ຮສສ ແຂວງ ແລະ ເມືອງໃນການປະຕິບັດງານ. ທາງຫ້ອງການ ຄຄຊ ບໍ່ໄດ້ມີ

ນະໂຍບາຍເລື້ອງເງິນເດືອນ, ແຕ່ພວກເຮົາມີແຕ່ຈ່າຍອັດຕາກິນໃນເວລາເດີນທາງໃຫ້ແກ່ເຂົາເຈົ້າ ແລະ ໃນເວລາທີ່ລົງໄປສຳຫຼວດສຳພາດຜູ້ທີ່ຖືກເຄາະຮ້າຍໃນບ້ານນັ້ນແຕ່ລະເທື່ອ ແມ່ນຈະຕ້ອງມີພະນັກງານເກັບກຳຂໍ້ມູນຂອງຫ້ອງການ ຄຄຊ ໄປນຳທຸກໆຄັ້ງ. ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຄຊ ໄດ້ສຳເລັດການຝຶກອົບຮົມເປັນເວລາໜຶ່ງວັນ ໃນການວາງແຜນລະບົບການລາຍງານກັບຂັ້ນບ້ານໃນ 142 ເມືອງ ທົ່ວປະເທດ.

ນີ້ແມ່ນລະບົບການລາຍງານໃນປີ: 2008, 2009 ແລະ 2010

| ແຂວງ | ບາດເຈັບ | ເສຍຊີວິດ |
|---|---|---|
| ແຂວງວຽງຈັນ | 2 | 0 |
| ຫຼວງພະບາງ | 9 | 8 |
| ຫົວພັນ | 29 | 14 |
| ໄຊຍະບູລີ | 4 | 0 |
| ຊຽງຂວາງ | 73 | 20 |
| ບໍລິຄຳໄຊ | 2 | 1 |
| ຄຳມ່ວນ | 20 | 11 |
| ສະຫວັນນະເຂດ | 40 | 10 |
| ສາລະວັນ | 29 | 10 |
| ເຊກອງ | 12 | 6 |
| ຈຳປາສັກ | 12 | 7 |
| ອັດຕະປື | 3 | 13 |
| ລວມ: | 235 | 100 |




**ທ່ານ ລຸກ (HIB):** ອີງຕາມກິດຈະກຳທີ່ຜູ້ຖືກເຄາະຮ້າຍກຳລັງເຮັດໃນເວລາເກີດອຸປະຕິເຫດ ສ່ວນຫຼາຍແມ່ນເກີດຂຶ້ນຍ້ອນ "ການຂຸດ". ມັນເປັນໄປໄດ້ບໍ່ທີ່ຢາກໃຫ້ເພີ້ມໃນເລື້ອງຂອງການຂຸດວ່າ ຂຸດເພື່ອເຮັດສວນ, ຂຸດເພື່ອເຮັດກະສິກຳ ຫຼື ວ່າຂຸດເພື່ອຊອກຫາເຫຼັກເສດ ຈຸດປະສົງຫຼັກຂອງອຸປະຕິເຫດທີ່ເກີດຂຶ້ນນັ້ນແມ່ນຍ້ອນສາເຫດຫຍັງ ເພາະວ່າມັນແມ່ນຈຳເປັນຫຼາຍໃນການຄົ້ນຄ້ວາຊອກຫາຕື່ມອີກ ແຕ່ມັນກໍ່ເປັນການດີຖ້າວ່າ ຫາກມີການນຳສະເໜີທຸກກິດຈະກຳທີ່ເຂົາເຈົ້າເຮັດຢູ່ນັ້ນ ເພື່ອພວກເຮົາຈະສາມາດຮັບຮູ້ຂໍ້ມູນທີ່ແທ້ຈິງ.

**ທ່ານ ບຸນຕາວ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ):** ຂໍຂອບໃຈສຳລັບຄຳຄິດເຫັນຕ່າງໆ. ໃນການນຳສະເໜີຢູ່ທີ່ນີ້ແມ່ນພວກເຮົາຍັງບໍ່ທັນປ້ອນເຂົ້າລະບົບຖານຂໍ້ມູນເທື່ອ, ມັນພຽງແຕ່ສະແດງໃຫ້ເຫັນເຖິງກິດຈະກຳໂດຍທົ່ວໄປເທົ່ານັ້ນ. ອີກອັນໜຶ່ງ, ສ່ວນແບບຟອມຂອງຜູ້ຖືກເຄາະຮ້າຍທັງໝົດ ແມ່ນໄດ້ຖືກນຳໄປໄວ້ໃນຖານຂໍ້ມູນຢ່າງລະອຽດ ແລະ ກໍ່ມີການອະທິບາຍຢ່າງຈະແຈ້ງ.

ໃນນາມຫ້ອງການ ຄຄຊ ກໍ່ຄືໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ປະຈຸບັນແມ່ນປະກອບມີນັກເດີນສຳຫຼວດ 2 ຄົນ ທີ່ເຮັດໜ້າທີ່ເດີນທາງໄປທຸກໆບ້ານ ບ່ອນທີ່ມີຜູ້ຖືກເຄາະຮ້າຍຈາກລະເບີດ. ນັກເດີນສຳຫຼວດເກັບກຳຂໍ້ມູນຜູ້ທີ່ໜຶ່ງແມ່ນ ຮັບຜິດຊອບຢູ່ທາງພາກໃຕ້ ແລະ ສ່ວນອີກຜູ້ໜຶ່ງແມ່ນຮັບຜິດຊອບຢູ່ທາງພາກເໜືອ (ນັກເດີນສຳຫຼວດເກັບກຳຂໍ້ມູນ 2 ທ່ານນີ້ ຈະເຮັດໜ້າທີ່ສືບສວນ ແລະ ສຳພາດ ຫາສາເຫດ ຂອງອຸປະຕິເຫດທີ່ເກີດຂຶ້ນໃນປີ 2008, 2009 ແລະ 2010).

ໄລຍະການສຳຫຼວດຂໍ້ມູນໃນໄລຍະ 1 ແລະ ໄລຍະ 2 ແມ່ນມີຄວາມແຕກຕ່າງກັນ, ເພາະວ່າໃນໄລຍະ1 ແມ່ນພວກເຮົາຈະເກັບກຳແຕ່ໄລຍະ 40 ປີຜ່ານມາ, ແຕ່ມັນກໍ່ເປັນການຍາກທີ່ເຂົາເຈົ້າຈະສາມາດຈື່ຈຳໄດ້ໝົດທຸກເຫດການ. ສະນັ້ນ, ໃນເວລາທີ່ນັກເດີນສຳຫຼວດເກັບກຳຂໍ້ມູນໄປສຳພາດຫາຜູ້ບາດເຈັບ ແລະ ເສຍຊີວິດ ນຳຍາດຕິພີ່ນ້ອງຂອງເຂົາເຈົ້າກໍ່ບໍ່ສາມາດໃຫ້ຂໍ້ມູນທີ່ຖືກຕ້ອງໃຫ້ແກ່ພວກເຮົາໄດ້ໝົດທຸກຢ່າງ.

ສຳລັບການເກັບກຳຂໍ້ມູນໃນໄລຍະ2 ຈະເກັບກຳເອົາແຕ່ຜູ້ທີ່ຖືກບາດເຈັບ ແລະ ເສຍຊີວິດ ຈາກອຸປະຕິເຫດລະເບີດບໍ່ທັນແຕກ ໃນປີ 2008, 2009 ແລະ 2010 ເທົ່ານັ້ນ. ພະນັກງານເກັບກຳຂໍ້ມູນຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈະເຮັດວຽກປະສານ

ງານກັບ ພະນັກງານເກັບກຳຂໍ້ມູນຂອງພະແນກ ຮສສ ເມືອງ ເພື່ອຂື້ນແຜນອອກເດີນທາງໃນການສຳຫຼວດໄປເອົາຂໍ້ມູນນຳຜູ້ທີ່ຖືກເຄາະຮ້າຍໃນບ້ານນັ້ນຕາມໄລຍະເວລາທີ່ໄດ້ກຳໜົດໄວ້. ຢູ່ໃນແບບຟອມສຳພາດນັ້ນຈະປະກອບມີ 10 ຄຳຖາມ, ໂດຍສະເພາະພວກເຮົາຈະໃຊ້ເຄື່ອງຈັບຈຸດພິກັດ ເພື່ອຈັບຈຸດເກີດເຫດໃນສະຖານທີ່ຂອງບ້ານນັ້ນ.

ທາງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແມ່ນຢາກຮຽກຮ້ອງມາຍັງບັນດາຄູ່ຮ່ວມປະຕິບັດງານທີ່ກ່ຽວຂ້ອງເພື່ອຊ່ວຍເຮັດສຳເລັດໃນການຕື່ມແບບຟອມ ຜູ້ທີ່ຖືກເຄາະຮ້າຍ ແລະ ອຸປະຕິເຫດ. ໃນກໍລະນີ, ຫາກມີອຸປະຕິເຫດເກີດຂຶ້ນ ຫຼື ວ່າຢູ່ໃກ້ສະຖານທີ່ ທີ່ຄູ່ຮ່ວມປະຕິບັດງານກຳລັງເຮັດວຽກຢູ່ທີ່ນັ້ນ ຖ້າເປັນໄປໄດ້ແມ່ນຢາກໃຫ້ຊ່ວຍເກັບກຳເອົາຂໍ້ມູນໃນເວລານັ້ນເລີຍ ແລະ ອີງຕາມແບບຟອມທີ່ທາງຫ້ອງການ ຄຄຊ ເປັນຜູ້ຈັດຕຽມໃຫ້.

**ແຜນປະຕິບັດ:** ຄາດວ່າຈະມີການກະກຽມຈັດຝຶກອົບຮົມໃຫ້ຄູ່ຮ່ວມປະຕິບັດງານ ໃນການເຮັດສຳເລັດຕື່ມແບບຟອມ ໃນອີກ 2-3 ເດືອນຕໍ່ໜ້າ

**ຮັບຜິດຊອບໂດຍ:** ໜ່ວຍງານຊ່ວຍຜູ້ຖືກເຄາະຮ້າຍ ຫ້ອງການ ຄຄຊ

**ທ່ານ ທອງດີ (ຫົວໜ້າໜ່ວຍງານສຶກສາຄວາມສ່ຽງ/ຄຄຊ):** ຢາກໃຫ້ທາງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍນັ້ນ ສົ່ງນຳເບີໂທລະສັບຕິດຕໍ່ຂອງຫ້ອງການ ຮສສ ແຂວງ ແລະ ເມືອງນັ້ນ ໄປໃຫ້ບັນດາຄູ່ຮ່ວມປະຕິບັດງານ.

**ແຜນປະຕິບັດ:** ຈະສົ່ງລາຍຊື່ ແລະ ນຳເບີໂທລະສັບຕິດຕໍ່ໃຫ້ບັນດາຄູ່ຮ່ວມປະຕິບັດງານ

**ຮັບຜິດຊອບໂດຍ:** ທ່ານ ບຸນຕາວ ຈັນທະວົງສາ

**ທ່ານນາງ ບົວລະພັນ(ແມັກ):** ເມື່ອມີອຸປະຕິເຫດເກີດຂຶ້ນຈະລາຍງານຫາພາກສ່ວນໃດ?

**ທ່ານ ບຸນຕາວ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ):** ຂ້າພະເຈົ້າເອງແມ່ນຢາກໃຫ້ບັນດາຄູ່ຮ່ວມປະຕິບັດງານນັ້ນລາຍງານຫາທາງພະແນກ ຮສສ ແຂວງ, ເມືອງ ໂດຍກົງ ແລະ ຫຼັງຈາກໄດ້ຮັບລາຍງານແລ້ວ ເຂົາເຈົ້າຈະເຮັດການລາຍມາຍັງຫ້ອງການ ຄຄຊ ເພາະໃນອານາຄົດນີ້ ຂ້າພະເຈົ້າຄິດວ່າ ພວກເຂົາເຈົ້າຈະເປັນຜູ້ຕິດຕາມຜູ້ທີ່ຖືກເຄາະຮ້າຍໃນສະຖານທີ່ເກີດເຫດ, ໂຮງໝໍ ແລະ ຈົນກະທັ້ງເຂົາເຈົ້າໄດ້ຮັບການຟື້ນຟູ.

**ແຜນປະຕິບັດ:** ແມ່ນໃຫ້ລາຍງານຫາພະແນກ ຮສສ ແຂວງ ແລະ ເມືອງໂດຍກົງ

**ທ່ານນາງ ວຽງມະນີ (ເວີລອີດິວເຄເຊິນ):** ຂ້າພະເຈົ້າຢາກຖາມທາງຫ້ອງການ ຄຄຊ ວ່າ ການລາຍງານຈຳນວນຕົວເລກຂອງຜູ້ຫຼອດຊີວິດຈາກລະເບີດບໍ່ທັນແຕກນີ້ ພວກເຂົາໄດ້ຮັບບາດເຈັບບ່ອນໃດຂອງຮ່າງກາຍ ເພາະວ່າອັນນີ້ມັນກໍ່ເປັນປະໂຫຍດຫຼາຍສຳລັບພວກເຮົາ ແລະ ຖ້ານາປຽບທຽບເບິ່ງແລ້ວຂໍ້ມູນທີ່ໄດ້ຈາກທາງໂຮງໝໍ ແລະ ທາງຫ້ອງການ ຄຄຊ ແມ່ນບໍ່ຕົງກັນ (ເພາະວ່າອົງການຂອງພວກເຮົາແມ່ນເຮັດວຽກຕົວຈິງໃນການຕິດຕາມຫາຜູ້ທີ່ຖືກບາດເຈັບນັ້ນມາຮັບການປິ່ນປົວ).

**ທ່ານ ບຸນຕາວ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ):** ອັນທີ່ຈິງແລ້ວ, ພະນັກງານທີ່ໄປເກັບກຳຂໍ້ມູນ ຈະສຳພາດໂດຍກົງກັບຜູ້ທີ່ໄດ້ຮັບເຄາະຮ້າຍນັ້ນ ແລະ ກວດກາເບິ່ງຕາມພາກສ່ວນຮ່າງກາຍບ່ອນທີ່ໄດ້ຮັບບາດເຈັບ ແລະ ຢູ່ໃນແບບຟອມສຳພາດກໍ່ຈະມີຮູບຄົນສະແດງຊີ້ໃຫ້ເຫັນຕາມຈຸດຕ່າງໆຂອງຮ່າງກາຍ ແລະ ພວກເຂົາກໍ່ຈະເລືອກເອົາຕາມທີ່ເຫັນຕົວຈິງ. ສະນັ້ນ, ທາງໜ່ວຍງານຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍຈຶ່ງຢາກຂໍຮ້ອງມາຍັງທຸກຄູ່ຮ່ວມງານທີ່ເຮັດວຽກຮ່ວມກັນ ໃນການຊ່ວຍເຫຼືອຜູ້ທີ່ໄດ້ຮັບເຄາະຮ້າຍນີ້ ຈົ່ງຊ່ວຍເອົານຳເບີໂທລະສັບຕິດຕໍ່ຂອງພວກເຂົາເຈົ້ານັ້ນ ແຈ້ງໃຫ້ທາງພະແນກ ຮສສ ແຂວງ ແລະເມືອງ ໄດ້ຮັບຮູ້. ສິ່ງເຫຼົ່ານີ້ຈະເປັນຫຼັກຖານ ໃນການຢັ້ງຢືນໃຫ້ທາງພະແນກ ຮສສ ເມືອງວ່າ ຜູ້ທີ່ໄດ້ຮັບເຄາະຮ້າຍນັ້ນໄດ້ຮັບການປິ່ນປົວແບບລຸກເລີນ ແລະ ໃຫ້ການປິ່ນປົວໃນດ້ານອື່ນໆອີກ.

**ແຜນປະຕິບັດ:** 1. ໃຫ້ທຸກຄູ່ຮ່ວມງານນັ້ນຈັດຕຽມນຳເບີຕິດຕໍ່ສ່ວນບຸກຄົນໄປໃຫ້ ຄຄຊ

2. ທາງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈະ ຈັດຕຽມຂໍ້ມູນໄປໃຫ້ ອົງການເວີລ໌ວິຊັ່ນເຄເຊີນເພື່ອ ຈະ ໄດ້ມີການປຽບທຽບຂໍ້ມູນຕື່ມອີກ.

**ທ່ານ ຟິວບິນ (HIB):** ສຳລັບເຄືອຂ່າຍຢູ່ຂັ້ນເມືອງ ແລະ ຂັ້ນບ້ານນັ້ນ, ຫຼັງຈາກໄດ້ຂໍ້ມູນແລ້ວ ພວກເຂົາເອົາໄປເຮັດແນວໃດຕໍ່?

**ທ່ານ ບຸນຕາວ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ):** ທາງຫ້ອງການ ຄຄຊ ຈະສົ່ງໄປຍັງ ພາກສ່ວນປະສານງານ, ການຈັດການ ແລະ ໃຫ້ການຕິດຕາມອື່ນໆອີກ. ແຕ່ມັນກໍ່ບໍ່ສາມາດໃຫ້ການຊ່ວຍເຫຼືອໄດ້ຢ່າງເຕັມເມັດເຕັມໜ່ວຍຕໍ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ, ມັນຍັງນອນຢູ່ໃນພາກສ່ວນຂອງການໃຫ້ການບໍລິການຕື່ມອີກ.

ໃນອານາຄົດຕໍ່ໜ້ານີ້ ທາງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໃນນາມຫ້ອງການ ຄຄຊ ຈະມີການພິຈາລະນາ ແລະ ທົບທວນລະບົບການລາຍງານຂອງບັນດາແຂວງ ແລະເມືອງ. ບໍ່ສະເພາະແຕ່ລາຍງານຫາຫ້ອງການ ຄຄຊ ເທົ່ານັ້ນ ແຕ່ຍັງຈະຕ້ອງໄດ້ລາຍງານ ຫາພາກສ່ວນໂຮງໝໍຕື່ມອີກເພື່ອໃຫ້ເຂົາເຈົ້າໄດ້ຮັບການປິ່ນປົວ ແລະ ຮຽກຮ້ອງໄປຍັງອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຊ່ວຍໃນການກວດສອບຫາສາເຫດຕື່ມອີກ.

**ແຜນປະຕິບັດ:** ຕາມການປະຕິບັດ ແລະ ລະບົບລາຍງານ ແມ່ນຈະຕ້ອງໄດ້ມີການທົບທວນຢູ່ຂັ້ນແຂວງ ແລະ ເມືອງ ໃນເວລາຈັດກອງປະຊຸມສຳມະນາຂຶ້ນໃນເດືອນ ເມສານີ້

**ຮັບຜິດຊອບໂດຍ:** ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຄຊ

**ທ່ານ ລຸກ (HIB):** ຂ້າພະເຈົ້າຢາກຕື່ມອີກອັນໜຶ່ງ ເພາະຂ້າພະເຈົ້າຄິດວ່າ ມັນສຳຄັນຫຼາຍສຳລັບພວກເຮົາທີ່ເຂົ້າໃຈເຖິງ ຄວາມໝາຍຂອງຂໍ້ມູນ. ທຳອິດແມ່ນພວກເຮົາຕ້ອງພະຍາຍາມເຂົ້າໃຈເຖິງສະຖານະການນັ້ນໃຫ້ດີ ເພື່ອຈະໄດ້ປັບປຸງການຊ່ວຍເຫຼືອຜູ້ທີ່ໄດ້ຮັບເຄາະຮ້າຍນັ້ນໃນຫຼາຍໆດ້ານໃຫ້ແກ່ພວກເຂົາເຈົ້າ, ເຊັ່ນດຽວກັນ ພວກເຮົາຕ້ອງໄດ້ພະຍາຍາມຄົ້ນຫາຂໍ້ມູນວ່າມັນຢູ່ໃສ ແລະ ແມ່ນຫຍັງທີ່ພວກເຮົາຈະຕ້ອງໄດ້ມີການປັບປຸງໃຫ້ການຊ່ວຍເຫຼືອໃນພາກຂອງການ ປະຖົມພະຍາບານ, ແຜນວຽກໃນການປິ່ນປົວ ແລະ ການຟື້ນຟູຕ່າງໆ. ຂໍ້ມູນທັງໝົດຈະຕ້ອງໄດ້ຈັດຕຽມໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ແລະ ສຳຄັນທີ່ສຸດແມ່ນພວກເຮົາຈະມີການປັບປຸງຂໍ້ມູນແນວໃດ ໃນເວລາຫາກມີຜູ້ຖືກເຄາະຮ້າຍຈາກລະເບີດ.

**ທ່ານ ສົມເພັດ (ສະມາຄົມຄົນພິການລາວ):** ມັນອາດຈະເປັນການດີ ຖ້າຫາກມີການຈັດກອງປະຊຸມສຳມະນາຂຶ້ນ ແລະ ເຊີນເອົາບັນດາຄູ່ຮ່ວມປະຕິບັດງານເຂົ້າຮ່ວມນຳ ເພາະວ່າປະຈຸບັນພວກເຮົາໄດ້ມີເຄືອຂ່າຍແລ້ວຢູ່ ພາກເໜືອ, ພາກໃຕ້ ແລະ ພາກກາງ.

**ແຜນປະຕິບັດ:** ດັ່ງທີ່ກ່າວໄວ້ໃນຂ້າງເທິງແລ້ວວ່າ ພວກເຮົາຈະເຊີນເອົາທຸກໜ່ວຍງານທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມກອງປະຊຸມໃນຄັ້ງນີ້

**ຮັບຜິດຊອບໂດຍ:** ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຄຊ

**ວາລະກອງປະຊຸມ 6 ກອງປະຊຸມລາຍງານຜົນສຳເລັດໄລຍະ 1 ທີ່ສູນຮ່ວມມືສາກົນ ແລະ ຝຶກອົບຮົມ**

**ທ່ານ ບຸນຕາວ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ):** ພວກເຮົາຈະມີກອງປະຊຸມຖະແຫຼງການຜົນສຳເລັດການສຳຫຼວດແຫ່ງຊາດໄລຍະ 1 ກ່ຽວກັບ ຜູ້ຖືກເຄາະຮ້າຍ ແລະ ອຸປະຕິເຫດ ຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ຄັ້ງວັນທີ 4 ກຸມພາ 2010 ທີ່ສູນຮ່ວມມືສາກົນ ແລະ ຝຶກໂອບຮົມ, ຫຼັກ5 ແລະ ຄາດວ່າຈະມີຜູ້ເຂົ້າຮ່ວມປະມານຮ້ອຍກວ່າຄົນ.

**ວາລະກອງປະຊຸມ 7 ຄວາມຄືບໜ້າຂອງການສ້າງແຜນຍຸດທະສາດ**

ທ່ານນາງ ຂີສ່ງວ (ພະນັກງານຝຶກຫັດຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ): ຈະມາເຮັດວຽກກ່ຽວກັບ ແຜນຍຸດທະສາດຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ເປັນເວລາ 6 ເດືອນ ແລະ ຊ່ວຍໃນການກະກຽມແຜນວຽກອັນທີ່ໜຶ່ງຄື: ການປິ່ນປົວດ້ານການແພດ.

- ການປິ່ນປົວດ້ານການແພດ
- ການຟື້ນຟູທາງດ້ານຮ່າງກາຍ
- ການຟື້ນຟູທາງດ້ານຈິດໃຈ
- ການຝຶກໄອບຮົມວິຊາຊີບ ແລະ ຟື້ນຟູທາງດ້ານເສດຖະກິດ
- ການສະໜັບສະໜູນ
- ການເກັບກຳຂໍ້ມູນ

**ແຜນປະຕິບັດ:** ຢ້ຽມຢາມ ແລະ ສຳພາດ ທຸກຄູ່ຮ່ວມປະຕິບັດງານຂອງໜ່ວຍງານຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ

**ຮັບຜິດຊອບໂດຍ:** ທ່ານນາງ ຂີສ່ງວ ແລະ ພະນັກງານໃນໜ່ວຍງານຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ

ວາລະກອງປະຊຸມ 8 ກອງປະຊຸມສຳມະນາ ສະໜັບສະໜູນການຕ້ານ ລູກລະເບີດບໍ່ມບີ້
ທ່ານ ວິທິດ(HIB)/ ທ່ານນາງ ຮອນລີ/ ທ່ານ ທຸມມີ: ໄດ້ຂຶ້ນນຳສະເໜີຜົນສະເລັດ ຂອງກອງປະຊຸມສຳມະນາ ສະໜັບສະໜູນການຕ້ານ ລູກລະເບີດບໍ່ມບີ້. ໃນນັ້ນໄດ້ມີຕົວແທນຈຳນວນ 8ທ່ານໃນປະເທດລາວ, 1ທ່ານມາຈາກປະເທດ ຫວຽດນາມ ແລະ ອີກ 1ທ່ານແມ່ນມາຈາກປະເທດ ກຳປູເຈຍ ທີ່ຈັດຂຶ້ນໃນວັນທີ່ 11-15 ເດືອນ ມັງກອນ ປີ 2010 ທີ່ຫ້ອງປະຊຸມສູນຟື້ນຟູຄົນພິການແຫ່ງຊາດ. ອັນທີ່ເດັ່ນກວ່າໝູ່ແມ່ນ ທາງອົງການ HIB ໄດ້ສາຍສາລະຄະດີຂອງຜູ້ທີ່ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊົມອີກດ້ວຍ.

ວາລະກອງປະຊຸມ 9 ວັນທີ ເດືອນ ປີຂອງກອງປະຊຸມໃນຄັ້ງໜ້າ
ກອງປະຊຸມກຸ່ມວິຊາການ ຈະໄດ້ຈັດຂຶ້ນໃນວັນທີ 24 ເດືອນ ມີນາ ປີ 2010 ທີ່ຫ້ອງປະຊຸມ ຄຄຊ

ວາລະກອງປະຊຸມ 10 ກອງປະຊຸມໄດ້ປິດໃນເວລາ 12:00

ອະນຸມັດໂດຍ:

ຫົວໜ້າຫ້ອງການ ຄຄຊ

ຫ້ອງການ ຄ.ຄ.ຊ

ສົມນຶກ ວໍລະສານ

ຈັດຕຽມໂດຍ:

ນາງ ມະນີຈັນ ແກ້ວລະຄອນ